**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----====oOo====-----

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 3919 /ກປ

ນະຄອນຫຼວງວຽງຈັນ,ວັນທີ 12 DEC 2012

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ

- ອີງຕາມ ກົດໝາຍວ່າດ້ວຍ ກະສິກຳ, ສະບັບເລກທີ 01/98ສພຊ, ລົງວັນທີ 10/10/1998;
- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ, ສະບັບເລກທີ 06/ສພຊ, ລົງວັນທີ 9/10/2008;
- ອີງຕາມ ກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາສະບັບປັບປຸງ, ສະບັບເລກທີ01/ສພຊ, ລົງວັນທີ20 ທັນວາ 2011;

## ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້
## ອອກຂໍ້ຕົກລົງ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການອະນຸລັກ, ການຄົ້ນຄວ້າທົດລອງ, ການຂະຫຍາຍ, ການຮັບຮອງ, ການຈົດທະບຽນ, ການຜະລິດ ແລະ ດຳເນີນທຸລະກິດແນວພັນພືດ ແນໃສ່ຄຸ້ມຄອງ, ຍົກລະດັບການຜະລິດພືດໃຫ້ມີປະສິດທິຜົນສູງ ຮັບປະກັນທາງດ້ານສະບຽງອາຫານຢ່າງໜັກແໜ້ນ, ການຜະລິດເປັນສິນຄ້າ ແລະຮ່ວມມືສາກົນ.

**ມາດຕາ 2. ແນວພັນພືດ**

ແນວພັນພືດ ແມ່ນກຸ່ມໜຶ່ງຂອງພືດທີ່ມີກຳມະພັນ ແລະ ລັກສະນະທາງພຶກສາສາດທີ່ຄືກັນ, ມີຄຸນສົມບັດສະເພາະຕົວຂອງແຕ່ລະກຸ່ມ, ມີຄວາມແຕກຕ່າງຈາກກຸ່ມອື່ນໃນພືດຊະນິດດຽວກັນ, ມີຄວາມສະໝ່ຳສະເໝີ ແລະມີຄວາມຄົງຕົວ ທາງດ້ານກາຍຍະພາບ ທີ່ໄດ້ມາຈາກ ແນວພັນພື້ນເມືອງ, ແນວພັນທ້ອງຖິ່ນ, ແນວພັນປັບປຸງ, ແນວພັນໄດ້ຈາກການປະສົມພັນ ແລະ ສ່ວນຂະຫຍາຍພັນ.